Allianz

ເລກທີ: 242/2021 /ບປລ

ນະຄອນຫຼວງວຽງຈັນ, ວັນທີ: 19/09/2021

# <u>ແຈ້ງການ</u>

ເຖິງ: ລູກຄ້າບໍລິສັດ ອາລີອັນສ໌ ປະກັນໄພລາວ

ເລື່ອງ: ການໃຫ້ບໍລິການ ແລະ ການດຳເນີນງານຂອງ ບໍລິສັດ ອາລີອັນສ໌ ປະກັນໄພລາວ ໃນຊ່ວງໄລຍະການປິດນະຄອນຫຼວງວຽງຈັນ ເນື່ອງຈາກການລະບາດຂອງເຊື້ອພະຍາດໂຄວິດ 19 (Covid-19)

ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ-ລັດ ກ່ຽວກັບການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 ຂອງນາຍົກລັດຖະມົນຕີ ເລກທີ 16/ຈນວ ລົງວັນທີ 19 ກັນຍາ 2021. ໂດຍຄຳນຶງເຖິງຄວາມປອດໄພຂອງລູກຄ້າ ແລະ ພະນັກງານ ພ້ອມທັງຮັບປະກັນຄຸນນະພາບຂອງການບໍລິການ, ບໍລິສັດ ອາລີອັນສ໌ ປະກັນໄພລາວ ຂໍແຈ້ງໃຫ້ທ່ານຊາບວ່າ ພວກເຮົາແມ່ນໄດ້ເປີດໃຫ້ບໍລິການປະກັນໄພເປັນປົກກະຕິ ຕັ້ງແຕ່ເວລາ 8:00ໂມງເຊົ້າ ຫາ 5:00ໂມງແລງ ແລະ ເພີ່ມມາດຕະການການບໍລິການເພື່ອໃຫ້ລູກຄ້າໄດ້ຮັບການບໍລິການທີ່ດີ ແລະ ຕໍ່ເນື່ອງ ນັບຕັ້ງແຕ່ວັນທີ 20-30 ກັນຍາ 2021. ສຳຫຼັບການບໍລິການແກ້ໄຂອຸປະຕິເຫດແມ່ນຍັງໃຫ້ການບໍລິການປົກກະຕິ 24 ຊົ່ວໂມງທຸກມື້. ກະລຸນາເບິ່ງລາຍລະອຽດການໃຫ້ບໍລິການແຕ່ລະປະເພດດັ່ງນີ້:

1. ລູກຄ້າທີ່ຕ້ອງການສອບຖາມຂໍ້ມູນ, ຊື້ສັນຍາປະກັນໄພໃໝ່ ຫຼື ຕໍ່ປະກັນໄພແມ່ນສາມາດພົວພັນກັບຕົວແທນຂາຍປະກັນໄພທົ່ວປະເທດ ໂດຍໂທສອບຖາມຂໍ້ມູນໄດ້ທີ່ເບີ 1457 ຕັ້ງແຕ່ເວລາ 8:00ໂມງເຊົ້າ – 5:00ໂມງແລງ ຫລື ທ່ານສາມາດກວດເບິ່ງຂໍ້ມູນ ແລະ ເບີຕິດຕໍ່ໄດ້ໃນເວັບໄຊສ໌: https://www.azlaos.com/lo_LA/insurance-agent.html
2. ສຳລັບຫ້ອງບໍລິການຂາຍປະກັນໄພ ແລະ ຫ້ອງບໍລິການຈ່າຍສິນທົດແທນແບບປະຕູດຽວ ທີ່ສຳນັກງານໃຫຍ່ ບໍລິສັດ ອາລີອັນສ໌ ປະກັນໄພລາວ ແມ່ນຈະເປີດໃຫ້ບໍລິການລູກຄ້າ ແຕ່ເວລາ 08:00ໂມງເຊົ້າ – 12:00 ໂມງສວາຍ ( ວັນຈັນ - ວັນສຸກ ) ເລີ່ມຕັ້ງແຕວັນທີ 20-30 ກັນຍາ 2021
3. ລູກຄ້າຈະໄດ້ຮັບການແຈ້ງເຕືອນຕໍ່ສັນຍາປະກັນໄພຂອງທ່ານຜ່ານທາງລະບົບ SMS, ອີເມວ, whatsapp ແລະການໂທແຈ້ງຈາກພະນັກງານຂາຍ ແລະ ຕົວແທນປະກັນໄພ.
4. ການອອກສັນຍາປະກັນໄພແມ່ນຈະດຳເນີນຜ່ານລະບົບອອນລາຍ ໃນຮູບແບບຂອງສັນຍາແບບອີເລັກໂຕນິກ (E-Policy). ບໍລິສັດຈະສົ່ງສັນຍາປະກັນໄພຂອງທ່ານທາງອີເມວ ແລະ WhatsApp. ສ່ວນສັນຍາສະບັບແທ້ແມ່ນຈະໄດ້ຈັດສົ່ງພາຍຫຼັງທີ່ເຫດການກັບຄືນສູ່ພາວະປົກກະຕິ.

Allianz

5. ລູກຄ້າສາມາດຈ່າຍຄ່າປະກັນໄພຜ່ານແອັບພິເຄຊັນ BCEL one ຫຼືຈ່າຍໂອນຜ່ານລະບົບທະນາຄານໄດ້ ເຊິ່ງທາງພະນັກງານຂາຍ ແລະ ຕົວແທນຈະແຈ້ງລາຍລະອຽດໃຫ້ທ່ານຕື່ມ.
6. ການບໍລິການແກ້ໄຂອຸປະຕິເຫດແມ່ນຍັງໃຫ້ບໍລິການປົກກະຕິ ຕະຫຼອດ 24 ຊົ່ວໂມງທຸກມື້ ໂທສາຍດ່ວນ 1456, 021 222 222 ແລະ 020 5524 4222.
7. ໃນກໍລະນີເກີດອຸປະຕິເຫດ ເນື່ອງຈາກມີຂໍ້ຈຳກັດໃນການອອກໄປບໍລິການກໍລະນີເກີດເຫດໃນໄລຍະທີ່ມີການເພີ່ມມາດຕະການສະກັດກັ້ນພະຍາດຂອງລັດຖະບານ, ທາງ ບປລ ຈະໄດ້ເພີ່ມຊ່ອງທາງການບໍລິການໂດຍການນຳໃຊ້ລະບົບສື່ສານທາງໄກເພື່ອເກັບກຳຂໍ້ມູນ ແລະ ລາຍລະອຽດຂອງອຸປະຕິເຫດ ເຊັ່ນ: ການໂທຜ່ານ WhatsApp ຫຼື Line ໝາຍເລກ 020 5524 4222 ເພື່ອເກັບກຳຂໍ້ມູນອຸປະຕິເຫດພາກສະໜາມ ແລະ ໃຫ້ການຊ່ວຍເຫຼືອທີ່ຈຳເປັນໃນການແກ້ໄຂບັນຫາສະເພາະໜ້າ. ສ່ວນການສົ່ງເອກະສານປະກອບສຳນວນອຸປະຕິເຫດ ແລະ ການຮຽກສິນທົດແທນປະກັນໄພ ແມ່ນຈະຕ້ອງໄດ້ປະຕິເຫດຕາມເງື່ອນໄຂຂອງສັນຍາປະກັນໄພ, ລູກຄ້າສາມາດສົ່ງຫາ ບປລ ໃນຮູບແບບເອເລັກໂຕນິກ ສຳຫຼັບສິນທົດແທນປະກັນໄພທີ່ມູນຄ່າບໍ່ເກີນ 3,000,000 ກີບ ຜ່ານອີເມວ claim@agl-allianz.com, WhatsApp ຫຼື Line ທີ່ໄດ້ລະບຸໄວ້ຂ້າງເທິງ.
8. ການບໍລິການຈ່າຍສິນທົດແທນແມ່ນຍັງດຳເນີນການຕາມປົກກະຕິ. ບໍລິສັດຂໍແນະນຳໃຫ້ລູກຄ້າແຈ້ງເລກບັນທິຂອງທ່ານເພື່ອຮັບການຈ່າຍສິນທົດແທນປະກັນໄພຜ່ານລະບົບໂອນເງິນຜ່ານທາງທະນາຄານ. ບປລ ຈະໄດ້ງົດການໃຫ້ບໍລິການເບີກຈ່າຍເງິນສົດ ຫຼື ອອກແຊັກທະນາຄານໄວ້ຊົ່ວຄາວ ເພື່ອຫລີກລ່ຽງການເດີນທາງມາພົວພັນວຽກທີ່ສຳນັກງານ ບປລ.
9. ລູກຄ້າສາມາດເຂົ້າກວດເບິ່ງຂໍ້ມູນສັນຍາປະກັນໄພ ແລະ ຂໍ້ມູນການແກ້ໄຂອຸປະຕິເຫດຂອງທ່ານໄດ້ທີ່ AGL My Insurance ໃນເວັບໄຊ້ຂອງ ບປລ https://my.agl-allianz.com/login.html
10. ທ່ານສາມາດເຂົ້າເບິ່ງຂໍ້ມູນເພີ່ມຕື່ມກ່ຽວກັບບໍລິສັດ ແລະ ການບໍລິການໄດ້ທີ່ www.azlaos.com

ບໍລິສັດ ອາລີອັນສ໌ ປະກັນໄພລາວ ຫວັງເປັນຢ່າງຍິ່ງວ່າມາດຕະການການໃຫ້ບໍລິການນີ້ຈະສາມາດອຳນວຍຄວາມສະດວກ ແລະ ສ້າງຄວາມໝັ້ນໃຈໃຫ້ກັບລູກຄ້າຂອງບໍລິສັດທຸກທ່ານ ວ່າຈະໄດ້ຮັບການຄຸ້ມກັນ ແລະ ການບໍລິການຢ່າງເປັນປົກກະຕິ. ພວກເຮົາຂອງໃຫ້ທ່ານມີສຸຂະພາບແຂງແຮງ, ຫ່າງໄກຈາກພະຍາດໂຄວິດ 19 ແລະ ງົດການເດີນທາງໄປພື້ນທີ່ສ່ຽງຕິດເຊື້ອພະຍາດເພື່ອຄວາມປອດໄພຂອງໂຕທ່ານ ແລະ ຄອບຄົວ.

ຮຽນມາດ້ວຍຄວາມນັບຖື,

ຄະນະອຳນວຍການ ບໍລິສັດ ອາລີອັນສ໌ ປະກັນໄພລາວ

ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ Allianz Insurance Laos Co.,LTD

Guy APOVY
CEO

ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ
ເລກທີ 33, ຖະໜົນ ລ້ານຊ້າງ, ອາຄານ ອາລີອັນສ໌
ຕູ້ ປ. ນ. 4223 ນະຄອນຫຼວງວຽງຈັນ, ສປປລາວ
ໂທລະສັບ 1457; + 856 21 215903;
ແຈ້ງອຸປະຕິເຫດ 24 ຊົ່ວໂມງ ໂທ: 1456, 021 222 222, 020 5524 4222

Allianz Insurance Laos Co.,Ltd
33, Lanexang Avenue, Allianz Building
P. O. Box: 4223, Vientiane Capital, Lao PDR
Phone: 1457; +856 21 215903;
24 hrs./7 Accident Helpline: 1456, 021 222 222, 020 5524 4222

www.azlaos.com
www.facebook.com/agl.allianz
E-mail: agl@agl-allianz.com